ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງ

ເລກທີ.325./ຈຂ.ສວ

ສາລະວັນ, ວັນທີ.31...05...2022

# ຂໍ້ຕົກລົງ

## ວ່າດ້ວຍ ການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນກິດຈະການສຳປະທານ ຢູ່ແຂວງສາລະວັນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ສົ່ງເສີມການລົງທຶນ ສະບັບເລກທີ 14/ ສພຊ ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງພະແນກແຜນການ ແລະ ການລົງທຶນສະບັບ ເລກທີ 153/ພຜທ.ສວ, ລົງວັນທີ 24/6/2021.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຈັດຕັ້ງປະຕິບັດ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເຮັດໃຫ້ການລົງທຶນພາຍໃນແຂວງມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຮັບປະກັນການປົກປ້ອງຈາກແຂວງ ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນພາກລັດ, ເອກະຊົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການສົ່ງເສີມການລົງທຶນ**

ການສົ່ງເສີມການລົງທຶນ ແມ່ນການວາງນະໂຍບາຍສົ່ງເສີມ, ການສ້າງສະພາບແວດລ້ອມ ແລະ ເງື່ອນໄຂໃນດ້ານຕ່າງໆ ແກ່ການລົງທຶນເພື່ອໃຫ້ຜູ້ລົງທຶນສາມາດດຳເນີນທຸລະກິດໄດ້ຢ່າງສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 3 ການອະທິບາຍຄຳສັບ**

1. ການລົງທຶນ ໝາຍເຖິງ ການນຳເອົາເງິນທຶນ, ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອດຳເນີນທຸລະກິດຢູ່ ສປປ ລາວ;
2. ຜູ້ລົງທຶນ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນຢູ່ພາຍໃນ ສປປ ລາວ ຫຼື ຢູ່ຕ່າງປະເທດຢ່າງຖືກຕ້ອງຕາມກົດໝາຍ;

3. ສັນຍາສຳປະທານໝາຍເຖິງ ສັນຍາທີ່ເຊັນລະຫວ່າງ ບຸກຄົນ ຫຼື ນິຕິບຸກຄົນ ກັບອົງການຂອງລັດ ທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດໃນການດຳເນີນ ທຸລະກິດ ຫຼື ການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດໝາຍຂອງ ສປປ ລາວ;
4. ບົດບັນທຶກຄວາມເຂົ້າໃຈ ໝາຍເຖິງ ເອກະສານບັນທຶກການຕົກລົງລະຫວ່າງ ນິຕິບຸກຄົນ ກັບ ອົງການຂອງລັດທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດ,ໃນການສຶກສາຄວາມເປັນໄປໄດ້ຂອງໂຄງການ;
5. ການຄຸ້ມຄອງ ໝາຍເຖິງ ການຄຸ້ມຄອງດ້ານລະບຽບກົດໝາຍ ເພື່ອໃຫ້ທຸກພາກສ່ວນປະຕິບັດຕາມ;
6. ອົງການຄຸ້ມຄອງ ໝາຍເຖິງ ອົງການປົກຄອງທີ່ຈັດຕັ້ງເປັນຄະນະ ແລະ ມີການພົວພັນຮ່ວມກັນ;
7. ອົງການກວດກາ ໝາຍເຖິງ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ;
8. ອາກອນກຳໄລ ໝາຍເຖິງ ອາກອນທາງກົງຊຶ່ງເກັບຈາກອາກອນກຳໄລ ຂອງວິສາຫະກິດລວມທັງຜູ້ປະກອບວາຊີບອິດສະຫຼະ ທີ່ດຳເນີນການຜະລິດທຸລະກິດ;
9. ເຂດ 1 ໝາຍເຖິງ ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄ່ງລ່າງເສດຖະກິດບໍ່ເອື້ອອຳນວຍແກ່ການລົງທຶນ ມີ 02 ເມືອງຄື: ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ;
10. ເຂດ 2 ໝາຍເຖິງ ເຂດທີ່ມີພື້ນຖານໂຄ່ງລ່າງເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ມີ 06 ເມືອງຄື: ເມືອງຄຸ້ມລານ, ເມືອງວາປີ,ເມືອງເລົ່າງາມ, ເມືອງຄົງເຊໂດນ,ເມືອງລະຄອນເພັງ ແລະ ເມືອງສາລະວັນ;
11. ຄລທຂ ໝາຍເຖິງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ.

**ມາດຕາ 4 ນະໂຍບາຍ ກ່ຽວກັບການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ**

ອົງການປົກຄອງແຂວງເອົາໃຈໃສ່ສົ່ງເສີມການລົງທຶນ ຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ: ການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ, ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ລວມທັງການຮັບຮູ້, ການປົກປ້ອງກຳມະສິດ ກ່ຽວກັບສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນໆ ຕາມທີ່ກົດໝາຍກຳນົດໄວ້;

ສົ່ງເສີມການລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການ ແລະ ທຸກເຂດພາຍໃນແຂວງ ເວັ້ນເສຍແຕ່ ເຂດ ແລະ ກິດຈະການທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ຂອງແຂວງມີຜົນສະທ້ອນຮ້າຍແຮງ ຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບ ຂອງປະຊາຊົນ ແລະ ວັດທະນະທຳອັນດີງາມ ຂອງຊາດ;

**ມາດຕາ 5 ຫຼັກການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນກິດຈະການສຳປະທານ**

1. ສອດຄ່ອງກັບຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ແລະ ເມືອງ ແນ່ໃສ່ການຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ແລະ ສອດຄ່ອງຕາມກົດໝາຍຂອງຂະແໜງການກ່ຽວຂ້ອງ ທີ່ວາງອອກໃນແຕ່ລະໄລຍະ;
2. ປົກປ້ອງສິດ, ຜົນປະໂຫຍດ ຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ ທີ່ດຳເນີນທຸລະກິດພາຍໃນແຂວງສາລະວັນ ຕາມທິດພັດທະນາແບບຍືນຍົງ ແລະ ສີຂຽວ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງປະຕິບັດວຽກງານ ສົ່ງເສີມ ແລະ ການຄຸ້ມຄອງການລົງທຶນໃນກິດຈະການສຳປະທານ ຢູ່ແຂວງສາລະວັນ.

## ໝວດທີ 2
## ນະໂຍບາຍສົ່ງເສີມການລົງທຶນ

ມາດຕາ 7 ນະໂຍບາຍສົ່ງເສີມການລົງທຶນ

ນະໂຍບາຍສົ່ງເສີມການລົງທຶນ ມີດັ່ງນີ້:

1. ນະໂຍບາຍສົ່ງເສີມການລົງທຶນຕາມຂະແໜງການ;
2. ນະໂຍບາຍສົ່ງເສີມ ຕາມເຂດ;
3. ນະໂຍບາຍສົ່ງເສີມດ້ານພາສີ, ອາກອນ ການນຳໃຊ້ທີ່ດິນ ແລະ ອື່ນໆ.

ມາດຕາ 8 ນະໂຍບາຍສົ່ງເສີມການລົງທຶນຕາມຂະແໜງການ

ຜູ້ລົງທຶນທີ່ມີຄວາມສົນໃຈຈະມາລົງທຶນໃນເຂດຮອງຮັບການລົງທຶນຂອງແຂວງ ຫຼື ຢູ່ຂັ້ນເມືອງ ( ເຂດທີ່ເມືອງຈັດສັນໄວ້ ) ແມ່ນຈະໄດ້ຮັບນະໂຍບາຍດັ່ງນີ້:

1. ການສະໜອງຂໍ້ມູນທີ່ດິນຢູ່ໃນເຂດຈຸດສຸມການລົງທຶນໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆໃນການສຳຫຼວດເນື້ອທີ່ດິນ;
2. ຫ້ອງການບໍລິການລົງທຶນປະຕູດຽວ ຈະຊ່ວຍໃນການດຳເນີນ ການຂໍຂື້ນໃບທະບຽນວິສາຫະກິດ, ໃບທະບຽນອາກອນ ຈາກຂະແໜງການທີ່ກ່ຽວຂ້ອງ;
3. ໂຄງການລົງທຶນໃນເຂດຈຸດສຸມ ໃນເມື່ອມີຄວາມຕ້ອງການແຮງງານ ເພື່ອປະກອບເຂົ້າໃນການດຳເນີນງານຂອງໂຄງການພາກລັດ ຈະເປັນໃຈກາງໃນການອຳນວຍຄວາມສະດວກ ທາງດ້ານເອກະສານຊ່ວຍປະສານແຮງງານ ຈາກອົງການປົກຄອງເມືອງ ແລະ ແຂວງຕ່າງໆ ອ້ອມຂ້າງ;
4. ຜູ້ລົງທຶນທີ່ລົງທຶນຢູ່ເຂດເມືອງພູດອຍ ຈະໄດ້ຮັບການຍົກເວັ້ນອາກອນກຳໄລ ຫຼື ຍົກເວັ້ນຄ່າເຊົ່າ ຫຼື ຄ່າສຳປະທານ ສູງສຸດບໍ່ໃຫ້ເກີນ 05 ປີ;
5. ຜູ້ລົງທຶນຢູ່ເຂດເມືອງທົ່ງພຽງຈະໄດ້ຮັບການຍົກເວັ້ນອາກອນກຳໄລ ຫຼື ຍົກເວັ້ນຄ່າເຊົ່າ ຫຼື ຄ່າສຳປະທານສູງສຸດບໍ່ໃຫ້ເກີນ 04 ປີ;
6. ການລົງທຶນອຸດສາຫະກຳປຸງແຕ່ງທີ່ນອນໃນບັນຊີກິດຈະການສົ່ງເສີມຢູ່ເຂດເມືອງພູດອຍ ແລະ ເມືອງທົ່ງພຽງແມ່ນຈະໄດ້ຮັບການຍົກເວັ້ນອາກອນກຳໄລໃນຊ່ວງໄລຍະການກໍ່ສ້າງ, ການທົດລອງຜະລິດສ່ວນມື້ເລີ່ມຕົ້ນການຜະລິດ ແລະ ເລີ່ມມີກຳໄລແມ່ນໃຫ້ເກັບອາກອນກຳໄລຕາມກິດຈະການລົງທຶນຕົວຈິງ;
7. ສຳລັບການເສຍພັນທະອາກອນຕ່າງໆແມ່ນຈະໄດ້ປັບປຸງໄປຕາມນະໂຍບາຍທີ່ລັດຖະບານກຳນົດອອກໃນແຕ່ລະໄລຍະ;
8. ໃນກໍລະນີທີ່ນັກລົງທຶນມີຄວາມສົນໃຈຢາກພັດທະນາໃນເຂດຈຸດສຸມທີ່ແຂວງກຳນົດໄວ້ໃນແຕ່ລະເຂດຈະໄດ້ຮັບການຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານຕື່ມອີກ 02 ປີ.

ມາດຕາ 9 ນະໂຍບາຍສົ່ງເສີມ ຕາມເຂດ

ນະໂຍບາຍສົ່ງເສີມຕາມເຂດ ກຳນົດເປັນ ສາມເຂດ ດັ່ງນີ້:

ເຂດ 1: ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ;

ເຂດ 2: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ;

ເຂດ 3: ເຂດເສດຖະກິດພິເສດ.

**ມາດຕາ 10 ນະໂຍບາຍສົ່ງເສີມ ດ້ານພາສີ, ອາກອນ, ການນໍາໃຊ້ທີ່ດິນ ແລະ ອື່ນໆ**

ຜູ້ລົງທຶນ ທີ່ລົງທຶນຕາມຂະແໜງການ ແລະ ເຂດ ຕາມທີ່ໄດ້ກໍານົດໃນມາດຕາ 8 ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ຈະໄດ້ນະໂຍບາຍຍົກເວັ້ນອາກອນກໍາໄລດັ່ງນີ້:

ເຂດ 1: ໄດ້ຮັບການຍົກເວັ້ນໃນໄລຍະເວລາ ສິບປີ, ສໍາລັບການລົງທຶນຕາມຂະແໜງການ ແລະ ຈະໄດ້ຮັບຍົກເວັ້ນເພີ່ມອີກ ຫ້າປີ;

ເຂດ 2: ໄດ້ຮັບການຍົກເວັ້ນໃນໄລຍະ ສີ່ປີ, ສໍາລັບການລົງທຶນຕາມຂະແໜງການ ແລະ ຈະໄດ້ຮັບຍົກເວັ້ນເພີ່ມອີກ ສາມປີ;

ໄລຍະການຍົກເວັ້ນອາກອນກໍາໄລ ໃຫ້ນັບແຕ່ປີທີ່ວິສາຫະກິດ ມີລາຍຮັບທຸລະກິດເປັນຕົ້ນໄປ;

ຫຼັງຈາກສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລດັ່ງກ່າວມາຂ້າງເທິງນັ້ນແລ້ວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ;

ເຂດ 3: ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ ໃນລະບຽບການ

## ໝວດທີ 3
## ຂັ້ນຕອນການພິຈາລະນາເອກະສານການຂໍອະນຸຍາດລົງທຶນ

**ມາດຕາ 11 ການພິຈາລະນາເອກະສານຂໍອະນຸຍາດລົງທຶນໃນກິດຈະການສໍາປະທານ**

1. ພາຍຫຼັງທີ່ພະແນກແຜນການຮັບເອກະສານຄໍາຮ້ອງຂໍລົງທຶນພ້ອມດ້ວຍເອກະສານຕິດຄັດຄົບຖ້ວນພາຍໃນ 02 ວັນລັດຖະການ ຕ້ອງໄດ້ສົ່ງໃຫ້ອົງການກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ເພື່ອຄົ້ນຄ້ວາປະກອບຄໍາເຫັນ ແລ້ວແຈ້ງຕອບກັບມາຊ້າສຸດບໍ່ໃຫ້ກາຍ 10 ວັນລັດຖະການ, ກໍລະນີທີ່ບໍ່ມີແຈ້ງຕອບເປັນລາຍລັກອັກສອນໝາຍວ່າພາກສ່ວນກ່ຽວຂ້ອງເຫັນດີເປັນເອກະພາບ;
2. ພະແນກແຜນການ ແລະ ການລົງທຶນ ສັງລວມຄໍາເຫັນ ເພື່ອກະກຽມເຂົ້າກອງປະຊຸມ ຄລທ.ຂ ປະຈໍາເດືອນໃນກໍລະນີຄໍາເຫັນຈາກຂະແໜງການ ແລະ ເມືອງທີ່ກ່ຽວຂ້ອງເຫັນດີເປັນເອກະພາບແມ່ນນໍາສະເໜີປະທານ ຄລທ.ຂ ພິຈາລະນາອະນຸມັດ ໂດຍບໍ່ນໍາເຂົ້າຄົ້ນຄ້ວາກອງປະຊຸມ ຄລທ;
3. ຜົນຂອງກອງປະຊຸມ ຄລທ.ຂ ພະແນກແຜນການ ແລະ ການລົງທຶນຕ້ອງໄດ້ແຈ້ງຕອບ ຫຼື ດໍາເນີນການຂໍອະນຸມັດພາຍໃນ 03 ວັນລັດຖະການ;
4. ພາຍຫຼັງໄດ້ຮັບຂໍ້ຕົກລົງອະນຸມັດໂຄງການລົງທຶນ ພະແນກແຜນການ ແລະ ການລົງທຶນເປັນໃຈກາງ ຈັດກອງປະຊຸມເຈລະຈາຮ່າງສັນຍາພ້ອມທັງຈັດພິທີເຊັນບໍ່ໃຫ້ເກີນ 30 ວັນລັດຖະການ ຮ່ວມກັບອົງການປົກຄອງທີ່ກ່ຽວຂ້ອງ;
5. ໃນກໍລະນີເມືອງຮັບຄໍາຮ້ອງຂໍລົງທຶນຈາກຜູ້ລົງທຶນ ໃນກິດຈະການເຊົ່າ-ສໍາປະທານເມືອງຕ້ອງໄດ້ກວດກາເອກະສານໃຫ້ຖືກຕ້ອງຄົບຖ້ວນຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ 14/ສພຊ, ລົງວັນທີ 17/11/2016 ແນະນໍາຜູ້ສະເໜີຂໍລົງທຶນປະກອບເອກະສານ ແລ້ວເຮັດສະໂນດນໍາສົ່ງຫາພະແນກແຜນການ ແລະ ການລົງທຶນແຂວງໂດຍການຢັ້ງຢືນຈາກເຈົ້າເມືອງບໍ່ໃຫ້ເກີນ 02 ວັນລັດຖະການ.

## ໝວດທີ 4
## ເງື່ອນໄຂການໂຈະການຍົກເລີກ ແລະ ສິ້ນສຸດການລົງທຶນ

**ມາດຕາ 12 ການໂຈະການລົງທຶນ**

1. ລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງຕາມທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ກົດໝາຍ ແລະ ລະບຽບການ;
2. ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະອື່ນໆທີ່ໄດ້ລະບຸໄວ້ໃນສັນຍາ;

3. ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ຍົກເລີກການລົງທຶນ;

4. ມີຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງຮຸນແຮງ.

**ມາດຕາ 13 ຂັ້ນຕອນການພິຈາລະນາໂຈະການລົງທຶນ**

ໂຄງການລົງທຶນອາດຈະຖືກພິຈາລະນາສັ່ງໂຈະຕາມການເຫັນດີຂອງກອງປະຊຸມ ຄລທ.ຂ ຕາມການສະເໜີ ຂອງຜູ້ລົງທຶນ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງເມືອງ;

ຜູ້ລົງທຶນໃນກິດຈະການສໍາປະທານທີ່ຖືກໂຈະ ຫຼື ບຸດເຊົາການເຄື່ອນໄຫວກິດຈະການຊົ່ວຄາວ ຕ້ອງໄດ້ຍື່ນເອກະສານສະເໜີຫາຫ້ອງການຜູ້ປະຈໍາການ ຄລທ.ຂ ເພື່ອພິຈາລະນາເປັນພື້ນຖານຄວາມເປັນເອກະພາບໃນການປະເມີນຜົນຂອງຄະນະກໍາມະການສົ່ງເສີມການລົງທຶນ.

**ມາດຕາ 14 ການຍົກເລີກການລົງທຶນ**

1. ຜູ້ລົງທຶນໃນກິດຈະການສໍາປະທານບໍ່ວາງເງິນຄໍ້າປະກັນໂຄງການຕາມບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາສໍາປະທານ ທີ່ໄດ້ກໍານົດໄວ້ ໂດຍຜ່ານການແຈ້ງເຕືອນ 02 ຄັ້ງຈາກຄູ່ສັນຍາທີ່ໄດ້ຮ່ວມລົງນາມໃນເບື້ອງຕົ້ນຖ້າບໍ່ສາມາດແກ້ໄຂບັນຫາຂໍ້ບົກພ່ອງທີ່ເກີດຂຶ້ນຈະ ກ້າວໄປເຖິງການລຶບລ້າງໂຄງການລົງທຶນ;
2. ເກີດມີຜົນກະທົບດ້ານສິ່ງແວດລ້ອມທີ່ບໍ່ສາມາດຄວບຄຸມ ແລະ ແກ້ໄຂໄດ້ກໍລະນີເກີດມີກະທົບໂດຍກົງຕໍ່ເຂດທີ່ຕັ້ງຂອງໂຄງການ, ຄະນະຄລທ.ຂຈະໄດ້ແຈ້ງໃຫ້ປັບປຸງຢ່າງເປັນທາງການ 02 ຄັ້ງແຕ່ຖ້າບໍ່ສາມາດແກ້ໄຂໄດ້ ໂຄງການດັ່ງກ່າວຈະຖືກນໍາສະເໜີຕໍ່ຄະນະ ຄລທ.ຂ ເພື່ອຍົກເລີກສັນຍາ;
3. ຜູ້ລົງທຶນບໍ່ຈັດຕັ້ງປະຕິບັດຕາມເງື່ອນໄຂຂໍ້ຜູກພັນທີ່ກໍານົດໄວ້ໃນສັນຍາສໍາປະທານ ໂດຍມີການແຈ້ງເຕືອນ 02 ຄັ້ງ ການແຈ້ງເຕືອນແຕ່ລະຄັ້ງແມ່ນຫ່າງກັນບໍ່ຕໍ່າກວ່າ 30ວັນ ຖ້າຫາກຜູ້ລົງທຶນມີເຫດຜົນຈໍາເປັນຕ້ອງໄດ້ແຈ້ງຕອບເປັນລາຍລັກອັກສອນເຖິງພະແນກແຜນການ ແລະ ການລົງທຶນ;
4. ຖ້າຫາກຜູ້ລົງທຶນບໍ່ປະຕິບັດຕາມແຈ້ງການພາຍໃນ 02 ຄັ້ງ ແມ່ນເຫັນດີສະເໜີ ປະທານ ຄລທ.ຂ ເພື່ອພິຈາລະນາລຶບລ້າງໂຄງການດັ່ງກ່າວ;
5. ພາຍຫຼັງຜູ້ລົງທຶນໄດ້ຮັບອະນຸຍາດລົງທຶນຈາກອົງການຈັດຕັ້ງລັດແລ້ວ, ຜູ້ລົງທຶນບໍ່ປະຕິບັດຕາມສັນຍາດໍາເນີນກິດຈະການບໍ່ຕໍ່ເນື່ອງ ຢຸດ-ເຊົາໃນໄລຍະ 02-03 ປີ, ຈະໄດ້ຍົກເລີກສັນຍາ, ພ້ອມຊໍາລະສະສາງໜີ້ສິນໃຫ້ແກ່ລັດ, ມອບຄືນທີ່ດິນເປັນຂອງລັດ ແລະ ຈະບໍ່ຈ່າຍຄ່າຊົດເຊີຍເສຍຫາຍໃດໆຄືນ.

**ມາດຕາ 15 ຂັ້ນຕອນການຍົກເລີກການລົງທຶນ**

ຂັ້ນຕອນການຍົກເລີກ ການລົງທຶນ ມີດັ່ງນີ້:

1. ອົງການທີ່ອະນຸຍາດ ເປັນຜູ້ອອກໜັງສືແຈ້ງຍົກເລີກການລົງທຶນ;
2. ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 16 ການສິ້ນສຸດການລົງທຶນ**

ການລົງທຶນ ຈະສິ້ນສຸດ ໃນກໍລະນີ ດັ່ງນີ້:

1. ໝົດອາຍຸການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນໃບອະນຸຍາດລົງທຶນ ຫຼື ໂຄງການລົງທຶນໄດ້ປະຕິບັດສໍາເລັດແລ້ວ;
2. ມີການຖອນໃບອະນຸຍາດການລົງທຶນ ຫຼື ຍົກເລີກການລົງທຶນ;
3. ໄດ້ດໍາເນີນການຍຸບເລີກວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;
4. ຍົກເລີກຕາມການສະເໜີ ຂອງຜູ້ລົງທຶນ ຫຼື ຄູ່ສັນຍາ ໂດຍມີການຢັ້ງຢືນ ຂອງຂະແໜງການທີ່ກ່ຽວຂ້ອງ;
5. ມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍຸບເລີກວິສາຫະກິດ ຫຼື ຍົກເລີກກິດຈະການ ການລົງທຶນ.

## ໝວດທີ 5

### ສິດ ແລະ ພັນທະ ຂອງຜູ້ລົງທຶນ

**ມາດຕາ 17 ສິດຂອງຜູ້ລົງທຶນ**

1. ລົງທຶນໃນທຸກຂະແໜງການ ແລະ ທຸກຂົງເຂດລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍຂອງ ສປປ ລາວ;
2. ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ, ນັກວິຊາການ, ຊ່ຽວຊານຕ່າງປະເທດ ມີສິດອາໄສຢູ່ ສ ປປ ລາວ ຕາມສັນຍາວ່າຈ້າງແຮງງານ;
3. ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນຢູ່ແຂວງສາລະວັນ;
4. ມີສິດໃນການຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນໃນກໍລະນີທີ່ກິດຈະການຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງນະໂຍບາຍ, ກົດໝາຍ ແລະ ລະບຽບການ;
5. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳທີ່ໄດ້ມາຈາກການລົງທຶນຂອງຕົນ;
6. ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆໃນການລົງທຶນຂອງຕົນ;
7. ໄດ້ຮັບຜົນປະໂຫຍດຈາກສັນຍາເຊົ່າ ຫຼື ສຳປະທານໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສ ປປ ລາວ;
8. ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດນຳໃຊ້ທີ່ດິນຕາມຈຸດປະສົງທີ່ຜູ້ລົງທຶນໄດ້ຮັບອະນຸຍາດອາຍຸການເຊົ່າ ຫຼື ສຳປະທານ;
9. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດໃນການວ່າຈ້າງແຮງງານ**

1. ຜູ້ລົງທຶນສຳປະທານສາມາດນຳເຂົ້າແຮງງານທາງດ້ານຮ່າງກາຍ(ກຳມະກອນ)ສູງສຸດເຖິງ15% ຂອງແຮງງານທັງໝົດ ແລະ ແຮງງານທາງດ້ານມັນສະໝອງ(ຊ່ຽວຊານ-ນັກວິຊາການ)ເຖິງ25% ຂອງຈຳນວນແຮງງານທັງໝົດ;
2. ແຮງງານທີ່ບໍ່ແມ່ນຊ່ຽວຊານ ແລະ ກຳມະກອນທີ່ຈຳເປັນແມ່ນໃຫ້ນຳໃຊ້ແຮງງານ ຊາວບ້ານບ່ອນໂຄງການຕັ້ງຢູ່ຖ້າຫາກບໍ່ພຽງພໍກັບຄວາມຕ້ອງການແມ່ນສາມາດພິຈາລະນາແຮງງານຢູ່ພາຍໃນເມືອງ ແຂວງ ແລະ ຕ່າງແຂວງ;
3. ຜູ້ລົງທຶນຕ້ອງປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ຜູ້ອອກແຮງງານຢ່າງຖືກຕ້ອງຕາມກົດໝາຍ: ເປັນຕົ້ນແມ່ນນະໂຍບາຍປະກັນສັງຄົມ, ປະກັນສຸຂະພາບ ແລະ ປະກັນໄພແຮງງານ ນະໂຍບາຍການຕອບແທນເມື່ອນຳໃຊ້ແຮງງານເກີນຊົ່ວໂມງເຮັດວຽກຕົວຈິງໂດຍປະຕິບັດຕາມກົດໝາຍແຮງງານ;
4. ຜູ້ລົງທຶນຕ້ອງປະຕິບັດຄ່າຈ້າງແຮງງານຂັ້ນຕໍ່າບໍ່ໃຫ້ຫຼຸດ1,100,000ກີບ/ເດືອນ.

**ມາດຕາ 19 ພັນທະຕໍ່ລັດ**

1. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີຂອງສປປລາວ, ໃນກໍລະນີຈຳເປັນ ກໍ່ສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການເງິນຂອງ ສປປ ລາວ;
3. ໃຫ້ຄວາມຮ່ວມມື ແລະ ປະສານງານເປັນຢ່າງດີກັບອົງການປົກຄອງແຂວງ ແລະ ເມືອງ ທີ່ໂຄງການຕັ້ງຢູ່;
4. ສົ່ງເສີມການນຳໃຊ້ແຮງງານລາວໂດຍສະເພາະແຮງງານເພດຍິງແລະຊົນເຜົ່າເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;

5. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນຂອງພາກເອກະຊົນ;
6. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນປະຈຳງວດ 06 ເດືອນ ແລະ 01ປີ ຕໍ່ຄະນະ ຄລທ.ຂ ແລະ ອົງການປົກຄອງເມືອງທີ່ໂຄງການຕັ້ງຢູ່;
7. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລະລະບຽບການ.

ມາດຕາ 20 ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ

1. ຜູ້ລົງທຶນຕ້ອງເຮັດບົດສຶກສາຜົນກະທົບສິ່ງແວດລ້ອມ ແລະ ສຳເລັດການຮັບຮອງຈຶ່ງສາມາດຈັດຕັ້ງປະຕິບັດໂຄງການໄດ້;
2. ຜູ້ລົງທຶນຕ້ອງໄດ້ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາຕາມທິດສີຂຽວ ແລະ ຍືນຍົງ;
3. ໃນກໍລະນີເກີດບັນຫາສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບການດັ່ງກ່າວຢ່າງທັນການ;
4. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມເທົ່າທີ່ມີຄວາມຈຳເປັນ;
5. ປະກອບສ່ວນໃນການພັດທະນາທ້ອງຖິ່ນເຂດໂຄງການຕັ້ງຢູ່ເຊັ່ນ: ບູລະນະເສັ້ນທາງ, ຂົວ, ສຸກສາລາ ໂຮງຮຽນ, ໄຟຟ້າ, ນ້ຳບາດານ ແລະ ອື່ນໆ ນອກຈາກນີ້ຕ້ອງໄດ້ປະກອບສ່ວນ ທຶນພັດທະນາບ້ານຕາມຄວາມອາດສາມາດຂອງຜູ້ລົງທຶນ;
6. ເຄົາລົບນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;
7. ທົດແທນຄ່າເສຍຫາຍ ແລະ ຊົດເຊີຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກການດຳເນີນໂຄງການ ຕາມການຕົກລົງເຫັນດີເປັນເອກະພາບລະຫວ່າງ ອົງການປົກຄອງແຂວງ, ເມືອງ, ບ້ານ ແລະ ຜູ້ລົງທຶນ.

ມາດຕາ 21 ການຄ້ຳປະກັນການລົງທຶນໃນກິດຈະການສຳປະທານ

1. ຜູ້ລົງທຶນຕ້ອງວາງຊັບຄ້ຳປະກັນ ( ເປັນເງິນ ) ກ່ອນເຊັນສັນຍາສຳປະທານໃນທຸກຄັ້ງ;
2. ໃນກໍລະນີທີ່ນັກລົງທຶນບໍ່ວາງເງິນຄ້ຳປະກັນໃນໄລຍະເວລາທີ່ກຳນົດພະແນກແຜນການ ແລະ ການລົງທຶນເຮັດເອກະສານແຈ້ງເຕືອນເຖິງບໍລິສັດ ຈຳນວນ 02 ຄັ້ງ, ຖ້າຫາກບໍລິສັດດັ່ງກ່າວບໍ່ຈັດຕັ້ງປະຕິບັດຖືວ່າຂໍ້ຕົກລົງດັ່ງກ່າວຈະຖືກນຳສະເໜີພິຈາລະນາລົບລ້າງ;
3. ພາຍຫຼັງປະຕິບັດໜ້າວຽກ ຂອງໂຄງການ ແລະ ມີຄວາມຄືບໜ້າເກີນ 30 ເປີເຊັນຕາມການກວດກາຂອງຄະນະກຳມະການ, ຜູ້ລົງທຶນສາມາດຖອນເງິນຄ້ຳປະກັນໂຄງການຄືນໄດ້.

## ໝວດທີ 6
## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ມາດຕາ 22 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ

| | |
|---|---|
| 1. ທ່ານ ເຈົ້າແຂວງໆ ສາລະວັນ | ເປັນປະທານ; |
| 2. ທ່ານ ຮອງເຈົ້າແຂວງຜູ້ຊີ້ນຳວຽກເສດຖະກິດ | ເປັນຮອງ; |
| 3. ທ່ານ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ | ເປັນຄະນະທັງເປັນຜູ້ປະຈຳການ; |
| 4. ທ່ານ ເຈົ້າເມືອງ 08 ຕົວເມືອງ | ເປັນຄະນະ; |
| 5. ທ່ານ ຫົວໜ້າຫ້ອງວ່າການປົກຄອງແຂວງ | ເປັນຄະນະ; |
| 6. ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ | ເປັນຄະນະ; |
| 7. ທ່ານ ຫົວໜ້າພະແນກການເງິນແຂວງ | ເປັນຄະນະ; |
| 8. ທ່ານ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ | ເປັນຄະນະ; |

9. ທ່ານ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ ເປັນຄະນະ;
10. ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຄະນະ;
11. ທ່ານ ຫົວໜ້າພະແນກແຮງງານສະຫວັດດີການ ແລະ ສັງຄົມແຂວງ ເປັນຄະນະ.
12. ທ່ານ ຫົວໜ້າພະແນກໂຍທາທິການ ແລະຂົນສົ່ງແຂວງ ເປັນຄະນະ;
13. ທ່ານ ຫົວໜ້າພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນຄະນະ;
14. ທ່ານ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນຄະນະ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ**

1. ຄົ້ນຄ້ວາ ແລະ ນຳສະເໜີອົງການປົກຄອງແຂວງ ພິຈາລະນາອະນຸມັດການລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມພາລະບົດບາດຂອງຕົນ ສຳລັບກິດຈະການທີ່ບໍ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມຂອງແຂວງ;
2. ພິຈາລະນາອະນຸຍາດການລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມພາລະບົດບາດຂອງຕົນ ສຳລັບກິດຈະການທີ່ບໍ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມຂອງແຂວງ;
3. ພິຈາລະນາອະນຸຍາດ ກ່ຽວກັບການສະເໜີຂໍສຳຫຼວດ, ເກັບກຳຂໍ້ມູນ ແລະ ສຶກສາຄວາມເປັນໄປໄດ້ໃນການລົງທຶນຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມພາລະບົດບາດຂອງຕົນ;
4. ພິຈາລະນາການປ່ຽນແປງ, ການໂຈະ ຫຼື ການຍົກເລີກການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມພາລະບົດບາດຂອງຕົນ;
5. ຊີ້ນຳການຈັດຕັ້ງປະຕິບັດວຽກງານບໍລິການ ການລົງທຶນປະຕູດຽວ ເພື່ອເຮັດໃຫ້ການສົ່ງເສີມ, ດຶງດູດ ແລະ ຄຸ້ມຄອງການລົງທຶນມີປະສິດທິພາບ ແລະ ປະສິດທິຜົນ;
6. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;
7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສົ່ງເສີມການລົງທຶນຕາມການມອບໝາຍ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ອົງການປົກຄອງແຂວງສາລະວັນ ເປັນປົກກະຕິທັນເວລາ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການຄຸ້ມຄອງສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

**ມາດຕາ 24 ອົງການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ**

ອົງການປົກຄອງແຂວງສາລະວັນ ເປັນຜູ້ຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ ພະແນກແຜນການ ແລະ ການລົງທຶນແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກການເງິນແຂວງ ພະແນກການທີ່ກ່ຽວຂ້ອງອື່ນໆ ແລະ ອົງການປົກຄອງເມືອງທີ່ກ່ຽວຂ້ອງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນແຂວງ**

1. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ;

2. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນຕາມຄວາມຮັບຜິດຊອບ ໃນທ້ອງຖິ່ນຂອງຕົນ;
3. ເປັນໃຈກາງປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາສຳປະທານ ແລະ ຕາງໜ້າໃຫ້ແຂວງລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍ;
4. ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ, ກິດຈະການ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ;
5. ປະສານສົມທົບກັບບັນດາຂະແໜງການ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນທ້ອງຖິ່ນຕົນ;
6. ຄົ້ນຄວ້າ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ອຳນວຍຄວາມສະດວກ ໃນການດຳເນີນການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມການລົງທຶນຕາມການມອບໝາຍ ຂອງຂັ້ນເທິງ;
9. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;
10. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານສົ່ງເສີມການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການແຜນການ ແລະ ການລົງທຶນເມືອງ**

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ຕາມຄວາມຮັບຜິດຊອບ ຂອງຕົນ;
2. ສ້າງ ແລະ ຄຸ້ມຄອງລະບົບ ຂໍ້ມູນຂ່າວສານ, ສະໜອງຂໍ້ມູນ ຂ່າວສານກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນ ຕາມຄວາມຮັບຜິດຊອບ ຂອງຕົນ;
3. ຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມລົງທຶນຕາມຄວາມຮັບຜິດຊອບ ຂອງຕົນ;
4. ປະສານສົມທົບກັບບັນດາຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການລົງທຶນ;
5. ອຳນວຍຄວາມສະດວກ, ສະໜັບສະໜູນການເຄື່ອນໄຫວວຽກງານການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຊອບ ຂອງຕົນ;
6. ເກັບກຳຂໍ້ມູນກ່ຽວກັບການລົງທຶນ ລວມທັງກິດຈະການລົງທຶນຕ່າງໆ ຢູ່ໃນເມືອງ, ເທດສະບານ;
7. ສະເໜີການສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກສົ່ງເສີມການລົງທຶນ;
8. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານສົ່ງເສີມການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ**

1. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍການພັດທະນາ ແລະ ການສົ່ງເສີມວິສາຫະກິດ;
2. ຄຸ້ມຄອງ ການມີຕົວຕົນ ແລະ ການຈັດຕັ້ງທຸລະກິດ ຂອງທຸກປະເພດວິສາຫະກິດ ນັບແຕ່ຂອດການສ້າງຕັ້ງໄປຈົນຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການຕໍ່ ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;
4. ບໍລິການຂຶ້ນທະບຽນວິສາຫະກິດ ໃນທຸກກິດຈະການ;
5. ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;
6. ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ;
7. ຊຸກຍູ້ ແລະ ຊີ້ນຳວຽກງານການພັດທະນາ ແລະ ສົ່ງເສີມວິສາຫະກິດ ເມືອງ, ເທດສະບານ;
8. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;
9. ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນກ່ຽວກັບການດຳເນີນທຸລະກິດ;
10. ສັ່ງໂຈະເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ວິສາຫະກິດ;
11. ຖອນທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ວິສາຫະກິດ;
12. ສັ່ງໃຫ້ປ່ຽນແປງ, ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດ ທີ່ບໍ່ຖືກຕ້ອງຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນເມືອງ;
13. ສະຫຼຸບ ແລະ ລາຍງານວຽກງານ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ**

1. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍການພັດທະນາ ແລະ ການສົ່ງເສີມວິສາຫະກິດ;
2. ຄຸ້ມຄອງ ການມີຕົວຕົນ ແລະ ການຈັດຕັ້ງທຸລະກິດ ຂອງທຸກປະເພດວິສາຫະກິດ ນັບແຕ່ຂອດການສ້າງຕັ້ງໄປຈົນຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການຕໍ່ ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;
4. ບໍລິການຂຶ້ນທະບຽນວິສາຫະກິດ ໃນທຸກກິດຈະການ;
5. ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;
6. ຮັບຄຳຮ້ອງປ່ຽນແປງເນື້ອໃນ ທະບຽນວິສາຫະກິດ;
7. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;
8. ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນກ່ຽວກັບການດຳເນີນທຸລະກິດ;
9. ສັ່ງໂຈະເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ວິສາຫະກິດ;
10. ຖອນທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ວິສາຫະກິດ;

11. ສັ່ງໃຫ້ປ່ຽນແປງ, ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດ ທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນຂອງຕົນ;

12. ສະຫຼຸບ ແລະ ລາຍງານວຽກງານ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 29 ສິດ ແລະ ໜ້າທີ່ ຂອງພະແນກການເງິນແຂວງ

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບຂະແໜງການເງິນທີ່ຕິດພັນກັບການສົ່ງເສີມການລົງທຶນ;
2. ຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ການອະນຸຍາດ ການລົງທຶນ, ຕໍ່ອາຍຸສັນຍາ ແລະ ປ່ຽນແປງເນື້ອໃນສັນຍາ;
3. ຊຸກຍູ້, ແນະນໍາ, ເຜີຍແຜ່, ຕິດຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ ໃຫ້ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
4. ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍ ດ້ານພາສີ, ອາກອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ປະສານສົມທົບກັບພະແນກແຜນການ ແລະ ການລົງທຶນ, ພະແນກການ, ອົງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ;
6. ສະເໜີພາກສ່ວນກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;
7. ສະເໜີສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນ ກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນຢູ່ ສປປ ລາວ ຕາມການມອບໝາຍ ຂອງຂັ້ນເທິງ;
9. ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;
10. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 30 ສິດ ແລະ ໜ້າທີ່ ຂອງຫ້ອງການການເງິນເມືອງ

1. ຈັດຕັ້ງ ແຜນນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບຂະແໜງການເງິນທີ່ຕິດພັນກັບວຽກງານການສົ່ງເສີມການລົງທຶນ;
2. ແນະນໍາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບວຽກງານການສົ່ງເສີມການລົງທຶນ;
3. ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍດ້ານພາສີ, ອາກອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;
4. ປະສານສົມທົບກັບຂະແໜງອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ ຂອງຕົນໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການ ການລົງທຶນ;

5. ສະເໜີພາກສ່ວນກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກໂຄງການ ຫຼື ກິດຈະການ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ສະເໜີສ້າງ, ບຳລຸງ, ຍົກລະດັບພະນັກງານ-ວິຊາການກ່ຽວກັບວຽກງານການລົງທຶນ;
7. ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
8. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ອົງການກວດກາສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

**ມາດຕາ 31 ອົງການກວດກາ**

1. ອົງການກວດກາພາຍໃນ ເຊິ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງ ແລະ ສົ່ງເສີມການລົງທຶນຢູ່ຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ຕາມພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 ເນື້ອໃນການກວດກາ**

1. ກວດກາການປະຕິບັດສັນຍາການລົງທຶນ;
2. ກວດກາການຈັດຕັ້ງປະຕິບັດຂັ້ນຕອນການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ ແລະ ເຕັກນິກ;
3. ກວດກາການປົກປັກຮັກສາສິ່ງແວດລ້ອມຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ , ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ;
4. ກວດກາການປະຕິບັດມາດຕະການຄວາມປອດໄພຂອງແຮງງານ;
5. ກວດທຸກໆ ບັນຫາທີ່ເກີດຂຶ້ນລວມທັງແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 33 ຮູບການ ການກວດກາ**

ຮູບການ ການກວດກາ ມີ 02 ຮູບການຄື:

1. ກວດກາຕາມລະບົບປົກກະຕິ 01 ຄັ້ງຕໍ່ປີ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
2. ກວດກາແບບກະທັນຫັນໃນເວລາທີ່ມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງເຕືອນລ່ວງໜ້າ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມສຳລັບພະນັກງານ**

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ສົມຮູ້ຮ່ວມຄິດ ຫຼື ອຳນວຍຄວາມສະດວກໃຫ້ຜູ້ລົງທຶນເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດທີ່ຂັດກັບລະບຽບ ແລະ ກົດໝາຍ;
3. ຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ;

4. ເປີດເຜີຍເອກະສານລັບທາງລັດຖະການ ແລະ ຂອງຜູ້ລົງທຶນ;
5. ແກ່ຍາວເວລາກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນໂດຍບໍ່ມີເຫດຜົນ;
6. ມີພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 35 ຂໍ້ຫ້າມສຳລັບຜູ້ລົງທຶນ**

1. ໃຫ້ສິນບົນຕໍ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ພະນັກງານລັດເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດທີ່ຂັດກັບກົດ ໝາຍ ແລະ ລະບຽບການ;
3. ຜູ້ລົງທຶນຕ່າງປະເທດຊື້-ຂາຍທີ່ດິນ, ຍົກເວັ້ນການສຳປະທານທີ່ດິນຈາກລັດ;
4. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳ, ປິດບັງລາຍຮັບ, ກຳໄລ ແລະ ຊຸກເຊື່ອງການກະທຳຜິດທີ່ຕິດພັນກັບການເສຍພາສີອາກອນ;
5. ໃສ່ຮ້າຍປ້າຍສີໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານ ຂອງລັດ;
6. ກະທຳຫຼືເຄື່ອນໄຫວໃດໆທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳຂອງແຂວງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
7. ມີພຶດຕິກຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
8. ຜູ້ລົງທຶນຢຸດ ຫຼື ໂຈະໂຄງການຕາມລຳພັງໃຈໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
9. ຜູ້ລົງທຶນແກ່ຍາວເວລາຈັດຕັ້ງປະຕິບັດໂຄງການລົງທຶນ.

## ໝວດທີ 10

### ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ;

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການລົງວິໄນ, ປັບໃໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີ ແລ້ວແຕ່ກໍລະນີເບົາ ຫຼື ໜັກຕາມກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 11

### ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງ ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ, ອົງການປົກຄອງເມືອງ ຫ້ອງການແຜນການ ແລະ ການລົງທຶນເມືອງ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງສາລະວັນ**

ໂພໄຊ ໄຊຍະສອນ